FoodShare WISCONSIN

ຂໍ້ກຳນົດດ້ານວຽກເຮັດສຳລັບຜູ້ໃຫຍ່ອາຍຸ 18 ຫາ 49 ປີ

THE WORK REQUIREMENT FOR ADULTS AGES 18 THROUGH 49

ຂໍ້ກຳນົດດ້ານວຽກເຮັດສຳລັບຜູ້ໃຫຍ່ອາຍຸ 18 ຫາ 49 ປີແມ່ນຫຍັງ?

ມັນເປັນຂໍ້ກຳນົດຂອງລັດຖະບານກາງທີ່ສະມາຊິກ FoodShare ບາງຄົນຈຳເປັນຕ້ອງຕອບສະໜອງ ເພື່ອໃຫ້ສືບຕໍ່ໄດ້ຮັບເງິນຊ່ວຍເຫຼືອ FoodShare. ເຊິ່ງມັນໃຊ້ກັບຜູ້ໃຫຍ່ ອາຍຸແຕ່ 18 ຫາ 49 ປີ ແລະ ບໍ່ມີລູກອາຍຸຕ່ຳກວ່າ 18 ປີທີ່ອາໄສຢູ່ໃນເຮືອນຂອງເຂົາເຈົ້າ ແລະ ຜູ້ທີ່ບໍ່ມີການຍົກເວັ້ນ.

ຂ້ອຍຈະຕອບສະໜອງຂໍ້ກຳນົດດ້ານວຽກເຮັດໄດ້ແນວໃດ?

ມີສາມວິທີໃນການຕອບສະໜອງຂໍ້ກຳນົດດ້ານວຽກເຮັດ:

1. ເຮັດວຽກຢ່າງໜ້ອຍ 80 ຊົ່ວໂມງຕໍ່ເດືອນ.
2. ເຂົ້າຮ່ວມໃນໂຄງການວຽກເຮັດທີ່ອະນຸຍາດໃຫ້ຢ່າງນ້ອຍ 80 ຊົ່ວໂມງຕໍ່ເດືອນ ເຊັ່ນວ່າ:
   - ການຈ້າງງານ ແລະ ການເຝິກອົບຮົມ FoodShare (FSET).
   - Wisconsin Works (W-2).
   - ໂຄງການສະເພາະພາຍໃຕ້ Workforce Innovation and Opportunity Act (WIOA).
3. ທັງເຮັດວຽກ ແລະເຂົ້າຮ່ວມໃນໂຄງການວຽກເຮັດທີ່ອະນຸຍາດໃຫ້ລວມກັນແລ້ວຢ່າງນ້ອຍ 80 ຊົ່ວໂມງຕໍ່ເດືອນ.

ຖ້າຂ້ອຍເປັນຜູ້ໃຫຍ່ທີ່ຈຳເປັນຕ້ອງຕອບສະໜອງຂໍ້ກຳນົດດ້ານວຽກເຮັດ, ເມື່ອໃດຂ້ອຍຈຶ່ງຈຳເປັນຕ້ອງເລີ່ມຕອບສະໜອງມັນ?

ທ່ານຈຳເປັນຕ້ອງເລີ່ມຕອບສະໜອງຂໍ້ກຳນົດດ້ານວຽກເຮັດໃນເດືອນທຳອິດທີ່ໄດ້ຮັບເງິນຊ່ວຍເຫຼືອ FoodShare. ເມື່ອໃດທີ່ຄຳຮ້ອງສະໝັກ FoodShare ໄດ້ຮັບອະນຸມັດ, ທຸກຄົນໃນຄຳຮ້ອງສະໝັກຜູ້ທີ່ຈຳເປັນຕ້ອງຕອບສະໜອງຂໍ້ກຳນົດດ້ານວຽກເຮັດຈະໄດ້ຮັບການນຳສົ່ງຫາໂຄງການ FSET.

ຜູ້ໃຫຍ່ອາຍຸ 18 ຫາ 49 ປີໃດແດ່ທີ່ໄດ້ຮັບການຍົກເວັ້ນຈາກຂໍ້ກຳນົດດ້ານວຽກເຮັດນີ້?

ທ່ານອາດຈະຖືກຍົກເວັ້ນ ແລະ ອາດຈະບໍ່ຈຳເປັນຕ້ອງຕອບສະໜອງຂໍ້ກຳນົດດ້ານວຽກເຮັດຖ້າສິ່ງໃດໜຶ່ງຕໍ່ໄປນີ້ເປັນຄວາມຈິງ:

- ທ່ານອາໄສຢູ່ກັບເດັກນ້ອຍທີ່ມີອາຍຸຕ່ຳກວ່າ 18 ປີ ຜູ້ທີ່ແມ່ນສ່ວນໜຶ່ງຂອງຄົວເຮືອນ FoodShare ດຽວກັນ.
- ທ່ານແມ່ນຜູ້ດູແລຫຼັກສຳລັບບຸກຄົນທີ່ບໍ່ສາມາດດູແລຕົນເອງໄດ້.
- ທ່ານແມ່ນຜູ້ດູແລຫຼັກສຳລັບເດັກນ້ອຍທີ່ເພິ່ງພາອາໄສ ທ່ານທີ່ມີອາຍຸຕ່ຳກວ່າ 6 ປີ.
- ທ່ານບໍ່ສາມາດເຮັດວຽກໄດ້ເນື່ອງຈາກຄວາມບົກພ່ອງທາງຮ່າງກາຍ ຫຼືຈິດໃຈ. ນີ້ລວມທັງ ການບໍ່ມີບ່ອນຢູ່ອາໄສເປັນເວລາຍາວ. ການບໍ່ມີບ່ອນຢູ່ອາໄສເປັນເວລາຍາວໝາຍເຖິງ ທ່ານຈະບໍ່ມີສະຖານທີ່ຢູ່ອາໄສເປັນປົກກະຕິເປັນເວລາ 30 ຄືນຕໍ່ໜ້າ.

- ທ່ານຖືພາ.
- ທ່ານກຳລັງໄດ້ຮັບ ຫຼືໄດ້ສະໝັກຂໍເອົາເງິນປະກັນການຫວ່າງງານ.
- ທ່ານກຳລັງເຂົ້າຮ່ວມໃນໂຄງການປິ່ນປົວຜູ້ຕິດເຫຼົ້າ ຫຼືຢາເສບຕິດອື່ນ (AODA) ຫຼື ໂຄງການຟື້ນຟູ.
- ທ່ານໄດ້ລົງທະບຽນເຂົ້າຮຽນໃນສະຖາບັນການຮຽນຊັ້ນສູງຢ່າງນ້ອຍເຄິ່ງເວລາ.
- ທ່ານມີອາຍຸ 18 ປີຂຶ້ນໄປ ເຊິ່ງກຳລັງເຂົ້າຮຽນໂຮງຮຽນອຸດົມຢ່າງນ້ອຍເຄິ່ງເວລາ.
- ທ່ານໄດ້ລົງທະບຽນກັບ W-2 ແລະ ປະຕິບັດຕາມຂໍ້ກຳນົດເລື່ອງຄຸນສົມບັດຂອງ W-2.
- ທ່ານເຮັດວຽກ 30 ຊົ່ວໂມງຂຶ້ນໄປ ຕໍ່ອາທິດ ຫຼື ຫາເງິນເທົ່າກັບ 30 ຊົ່ວໂມງຂຶ້ນໄປ ຕໍ່ອາທິດໃນອັດຕາຄ່າຈ້າງຂັ້ນຕ່ຳຂອງລັດຖະບານກາງ.
- ທ່ານອາໄສຢູ່ໃນເຂດຍົກເວັ້ນການຫວ່າງງານ ຫຼື ເປັນສະມາຊິກຊົນເຜົ່າທີ່ອາໄສຢູ່ໃນດິນຂອງຊົນເຜົ່າ ຫຼື ເຂດສະຫງວນທີ່ມີການຍົກເວັ້ນການຫວ່າງງານ. ສຳລັບລາຍຊື່ຂອງເຂດຍົກເວັ້ນການຫວ່າງງານ ແລະ ດິນຂອງຊົນເຜົ່າ ຫຼື ເຂດສະຫງວນ, ໄປເບິ່ງໄດ້ທີ່ www.dhs.wisconsin.gov/fset/exemptions.htm.

ໝາຍເຫດ: ທ່ານອາດຈະຈຳເປັນຕ້ອງສະໜອງຫຼັກຖານສະແດງວ່າທ່ານໄດ້ຮັບການຍົກເວັ້ນ.

ຈະເປັນແນວໃດຖ້າຂ້ອຍຕອບສະໜອງ ຂໍ້ກຳນົດດ້ານວຽກເຮັດບໍ່ໄດ້?

ຖ້າທ່ານຈຳເປັນຕ້ອງຕອບສະໜອງຂໍ້ກຳນົດດ້ານວຽກເຮັດ ແຕ່ຕອບສະໜອງບໍ່ໄດ້, ທ່ານອາດຈະຖືກຈຳກັດຕໍ່ເງິນຊ່ວຍເຫຼືອ FoodShare ສາມເດືອນໃນໄລຍະ 36 ເດືອນ (ສາມປີ) ເທົ່ານັ້ນ. ເພື່ອສືບຕໍ່ໄດ້ຮັບເງິນຊ່ວຍເຫຼືອ FoodShare ຫຼັງຈາກສາມເດືອນ, ທ່ານຕ້ອງຕອບສະໜອງຂໍ້ກຳນົດດ້ານການເຮັດວຽກ, ໄດ້ຮັບການຍົກເວັ້ນ ຫຼືລໍຖ້າຈົນສິ້ນສຸດໄລຍະ 36 ເດືອນຂອງທ່ານ.

ຂ້ອຍໄດ້ຮັບຄວາມຊ່ວຍເຫຼືອໃນການຕອບສະໜອງ ຂໍ້ກຳນົດດ້ານວຽກເຮັດແນວໃດ?

ທ່ານຈະຖືກນຳສົ່ງຫາໂຄງການ FSET ໃນເວລາທີ່ທ່ານຕໍ່ອາຍຸ ຫຼືສະໝັກຂໍເອົາເງິນຊ່ວຍເຫຼືອ FoodShare ຖ້າທ່ານຈຳເປັນຕ້ອງຕອບສະໜອງໄດ້ຂໍ້ກຳນົດດ້ານວຽກເຮັດ ແລະຍັງບໍ່ທັນເຮັດວຽກ ຫຼືເຂົ້າຮ່ວມໃນໂຄງການເຮັດວຽກໃດໆເປັນຢ່າງນ້ອຍ 80 ຊົ່ວໂມງຕໍ່ເດືອນ ຫຼືລວມກັນທັງສອງຢ່າງ.

FSET ສາມາດຊ່ວຍທ່ານຕອບສະໜອງໄດ້ຂໍ້ກຳນົດດ້ານວຽກເຮັດ. FSET ໃຫ້ການບໍລິການຟຣີເພື່ອຊ່ວຍທ່ານສ້າງທັກສະດ້ານວຽກເຮັດ ແລະຊອກຫາການຈ້າງງານ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ FoodShare ຫຼື ໂຄງການ FSET:

- ເຂົ້າເບິ່ງ www.dhs.wisconsin.gov/foodshare/index.htm.
- ຕິດຕໍ່ຫາອົງການປະຈຳທ້ອງຖິ່ນຂອງທ່ານ.

ເພື່ອຊອກຫາອົງການຂອງທ່ານ ໃຫ້ເຂົ້າ ຫາwww.dhs.wisconsin.gov/forwardhealth/resources.htm, ເບິ່ງໜ້າ 2 ຂອງໃບແຈ້ງຂໍ້ມູນນີ້ ຫຼືໂທ ຫາຝ່າຍບໍລິການສະມາຊິກທີ່ 800-362-3002 (ມີ TTY ແລະການບໍລິການແປພາສາ).

ຂໍ້ມູນຕິດຕໍ່ກຸ່ມທະນາຄານຮັກສາລາຍຮັບ (Income Maintenance Consortiums) ແລະ ຫນ່ວຍງານຊົນເຜົ່າ (Tribal Agencies)

ກຸ່ມທະນາຄານຮັກສາລາຍຮັບ (ມັກເອີ້ນວ່າ: ຫນ່ວຍງານ) ແລະ ຫນ່ວຍງານຊົນເຜົ່າສາມາດຊ່ວຍທ່ານໄດ້ໃນເລື່ອງການບໍລິການໃນການມີສິດໄດ້ຮັບໂຄງການຕ່າງໆເຊັ່ນ: Medicaid, BadgerCare Plus ແລະ FoodShare. ຕາຕະລາງລຸ່ມນີ້ມີລາຍຊື່ຂອງກຸ່ມທະນາຄານຮັກສາລາຍຮັບ ແລະ ຫນ່ວຍງານຊົນເຜົ່າທີ່ວົງງານຕາມລຳດັບຕົວອັກສອນ ແລະ ລວມທັງເບີໂທລະສັບພ້ອມທັງຄາວຕີ້ທີ່ປະກອບຂຶ້ນເປັນແຕ່ລະກຸ່ມທະນາຄານ. ຖ້າທ່ານມີຄຳຖາມກ່ຽວກັບການມີສິດໄດ້ຮັບ ຫຼື ເລື່ອງຂອງທ່ານ, ໂທຫາກຸ່ມທະນາຄານທີ່ເປັນຕົວແທນຄາວຕີ້ຂອງທ່ານ ຫຼື ຫນ່ວຍງານຊົນເຜົ່າຂອງທ່ານ.

Bad River Band of Lake Superior Tribe of Chippewa Indians			**715-682-7127**
Bay Lake			**888-794-5747**
• Brown • Door	• Marinette • Oconto	• Shawano	
Capital			**888-794-5556**
• Adams • Columbia • Dane	• Dodge • Juneau • Richland	• Sauk • Sheboygan	
Central			**888-445-1621**
• Langlade • Marathon	• Oneida • Portage		
East Central Income Maintenance Partnership			**888-256-4563**
• Calumet • Green Lake • Kewaunee	• Manitowoc • Marquette • Outagamie	• Waupaca • Waushara • Winnebago	
Forest County Potawatomi Community			**715-478-4433**
Great Rivers			**888-283-0012**
• Barron • Burnett • Chippewa • Douglas	• Dunn • Eau Claire • Pierce	• Polk • St. Croix • Washburn	
Lac Courte Oreilles Band of Lake Superior Tribe of Chippewa Indians of Wisconsin			**715-634-8934**
Lac du Flambeau Band of Lake Superior Tribe of Chippewa Indians			**715-588-4235**
Menominee Indian Tribe of Wisconsin			**715-799-5137**
Milwaukee Enrollment Services (MilES)			**888-947-6583**
Milwaukee			
Moraine Lakes			**888-446-1239**
• Fond du Lac • Ozaukee	• Walworth • Washington	• Waukesha	
Northern			**888-794-5722**
• Ashland • Bayfield • Florence • Forest	• Iron • Lincoln • Price • Rusk	• Sawyer • Taylor • Vilas • Wood	
Oneida Nation			**800-216-3216**
Red Cliff Band of Lake Superior Chippewa			**715-779-3706**
Sokaogon Chippewa Community			**715-478-3265**
Southern			**888-794-5780**
• Crawford • Grant • Green	• Iowa • Jefferson	• Lafayette • Rock	
Stockbridge-Munsee Community			**715-793-4032**
Western Region for Economic Assistance			**888-627-0430**
• Buffalo • Clark • Jackson	• La Crosse • Monroe • Pepin	• Trempealeau • Vernon	
Wisconsin's Kenosha Racine Partnership (WKRP)			**888-794-5820**
• Kenosha	• Racine		

ແຜນທີ່ຂອງກຸ່ມທະນາຄານຮັກສາລາຍຮັບ (Income Maintenance Consortiums) ແລະ ຫນ່ວຍງານຊົນເຜົ່າ (Tribal Agencies)



WISCONSIN DEPARTMENT of HEALTH SERVICES

Division of Medicaid Services
P-02342L (02/2019)

ຖະແຫຼງການບໍ່ເລືອກປະຕິບັດ

ເພື່ອສອດຄ່ອງກັບກົດຫມາຍວ່າດ້ວຍສິດທິພົນລະເຮືອນຂອງລັດຖະບານກາງແລະກະຊວງກະສິກຳສະຫະລັດ (U.S. Department of Agriculture ຫຼື USDA) ລະບຽບການສິດທິພົນລະເຮືອນແລະນະໂຍບາຍ, USDA, ທຸລະກິດຂອງຕົນ, ຫ້ອງການ, ແລະພະນັກງານ, ແລະສະຖາບັນເຂົ້າຮ່ວມໃນການຫຼືການບໍລິຫານໂຄງການ USDA ແມ່ນຖືກຫ້າມຈາກທຸກໆການຈຳແນກເລືອກປະຕິບັດໂດຍອີງໃສ່ເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ, ສາດສະຫນາ, ຄວາມພິການ, ອາຍຸສູງສຸດ, ຄວາມເຊື່ອຖືທາງດ້ານການເມືອງ, ຫຼືຖືກແກ້ແຄ້ນຫຼືການໂຕ້ຕອບກ່ຽວກັບ ກິດຈະກຳສິດທິພົນລະເຮືອນກ່ອນໃນໂຄງການ ຫຼືກິດຈະກຳດຳເນີນການ ຫຼືທີ່ໄດ້ຮັບການສະຫນັບສະຫນູນໂດຍ USDA.

ຜູ້ຄົນພິການທີ່ຮຽກຮ້ອງໃຫ້ມີວິທີການທາງເລືອກຂອງການສື່ສານເພື່ອຂໍ້ມູນຂອງໂຄງການ (ເຊັ່ນ: ພາສາ Braille, ຕົວພິມຂະຫນາດໃຫຍ່, ເທັບສຽງ, ພາສາມືອາເມຣິກາ, ແລະອື່ນໆ), ຄວນຈະຕິດຕໍ່ຫາອົງການ (ພາກລັດຫຼືຂອງທ້ອງຖິ່ນ) ບ່ອນທີ່ເຂົາເຈົ້າພະຍາຍາມ ນຳໃຊ້ຮຽກຮ້ອງຂໍ້ມູນ. ບຸກຄົນຜູ້ທີ່ເປັນຄົນຫູຫນວກ, ມີການໄດ້ຍິນລຳບາກ ຫຼືປາກກືກ ອາດຈະຕິດຕໍ່ຫາ USDA ຜ່ານບໍລິການຖ່າຍທອດລັດຖະບານກາງ (Federal Relay Service) ທີ່ (800) 877-8339. ນອກຈາກນີ້, ຂໍ້ມູນຂ່າວສານໂຄງການອາດມີຢູ່ໃຫ້ໃນພາສາອື່ນໆ

ເພື່ອຍື່ນຄຳຮ້ອງທຸກທີ່ກ່ຽວກັບການຈຳແນກເລືອກປະຕິບັດ, ສຳເລັດແບບຟອມການຮ້ອງຮຽນ USDA Program Discrimination, (AD, 3027) ພົບອອນໄລນ່ໄດ້ທີ່ເວັບ: How to File a Complaint, ແລະມີໃຫ້ຢູ່ໃນທຸກທີ່ທຳການ USDA, ຫຼືຂຽນຈົດຫມາຍໄປເຖິງ USDA ແລະຂຽນຂໍ້ມູນ ທີ່ຕ້ອງໃສ່ໃນແບບຟອມການຮ້ອງຮຽນຮວມຢູ່ໃນຈົດຫມາຍດ້ວຍ. ເພື່ອຂໍເອົາສຳເນົາແບບຟອມ, ໃຫ້ໂທຫາ (866) 632-9992. ຍື່ນສ່ງແບບຟອມທີ່ສຳເລັດແລ້ວຂອງທ່ານຫຼືສ່ງຈົດຫມາຍໄປທີ່ USDA ໂດຍ:

(1) ສ່ງທາງໄປສະນີ: U.S. Department of Agriculture
Office of the Assistant Secretary for Civil Rights
1400 Independence Avenue, SW
Washington, D.C. 20250-9410;

(2) ທາງແຟັກ: (202) 690-7442; ຫຼື

(3) ທາງອີເມວ: program.intake@usda.gov

ສະຖາບັນນີ້ແມ່ນເປັນທີ່ໃຫ້ໂອກາດເທົ່າທຽມກັນ.